HADSADY. (2022). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 8. Issue 1. Jan – Jun 2022. Page 136 - 143

# ການຈັດກິດຈະກຳການຮຽນ-ການສອນ ຂອງການອ່ານຈັບໃຈຄວາມ ພາສາຝຣັ່ງ ໂດຍໃຊ້ວິທີສອນແບບ KWL-PLUS ຂອງນັກສຶກສາຄູສາຍພາສາຝຣັ່ງ ຊັ້ນປີທີ 2 ລະບົບ 12+4 ທີ່ ວິທະຍາໄລຄູຫຼວງພະບາງ

**ສຸດາຈັນ ຫັດສະດີ***

*ສາຂາ ຄູພາສາຝຣັ່ງ ຫ້ອງການພາສາຕ່າງປະເທດ ວິທະຍາໄລຄູຫຼວງພະບາງ, ສປປ ລາວ*

*** ຜູ້ຕິດຕໍ່ພົວພັນ:**

*ສຸດາຈັນ ຫັດສະດີ*

*ຂະແໜງພາສາຕ່າງປະເທດ,*

*ວິທະຍາໄລຄູຫຼວງພະບາງ,*

*ເບີໂທ: +856 20 9999 6366,*

*ອີເມວ:*

*Soudachanh@lpbttc.edu.la*

*ຂໍ້ມູນບົດຄວາມ:*

*ການສົ່ງບົດຄວາມ: 05 ມັງກອນ 2022*

*ປັບປຸງສຳເລັດ: 30 ມີນາ 2022*

*ການຕອບຮັບ: 25 ເມສາ 2022*

## ບົດຄັດຫຍໍ້

ການວິໄຈຄັ້ງນີ້ ມີຈຸດປະສົງເພື່ອ 1). ຊອກຫາປະສິດທິພາບການຈັດກິດຈະກຳການຮຽນ-ການສອນອ່ານຈັບໃຈຄວາມພາສາຝຣັ່ງ ໂດຍໃຊ້ວິທີສອນແບບ KWL-PLUS ຂອງນັກສຶກສາສາຍຄູພາສາຝຣັ່ງ ປີທີ 2 ລະບົບ 12+4 ວິທະຍາໄລຄູຫຼວງພະບາງ ສູງກວ່າເກນ 80/80, 2) ຊອກຫາປະສິດທິຜົນການຈັດກິດຈະກຳການຮຽນ-ການສອນ ອ່ານຈັບໃຈຄວາມພາສາຝຣັ່ງ ໂດຍໃຊ້ວິທີສອນແບບ KWL-PLUS ຂອງນັກສຶກສາສາຍຄູພາສາຝຣັ່ງ ປີທີ 2 ລະບົບ 12+4 ທີ່ ວິທະຍາໄລຄູຫຼວງພະບາງ ແລະ 3) ວິເຄາະລະດັບຄວາມເພິ່ງພໍໃຈຂອງນັກສຶກສາສາຍຄູພາສາຝຣັ່ງ ປີທີ 2 ລະບົບ 12+4 ທີ່ ວິທະຍາໄລຄູຫຼວງພະບາງ ຕໍ່ກັບການຈັດກິດຈະກຳການຮຽນ-ການສອນ ອ່ານຈັບໃຈຄວາມພາສາຝຣັ່ງ ໂດຍໃຊ້ວິທີສອນແບບ KWL – PLUS. ກຸ່ມຕົວຢ່າງທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ ແມ່ນນັກສຶກຄູສາຍພາສາຝຣັ່ງ ຊັ້ນປີທີ 2 ລະບົບ 12+4 ວິທະຍາໄລຄູຫຼວງພະບາງ ຈຳນວນ 14 ຄົນ ທີ່ໄດ້ຈາກການເລືອກແບບເຈາະຈົງ. ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າປະກອບມີ ບົດສອນ ຈຳນວນ 4 ບົດ, ແບບທົດສອບ 4 ຊຸດ ຈາກແຕ່ລະບົດສອນ ແລະ ແບບສອບຖາມຄວາມເພິ່ງພໍໃຈຂອງນັກສຶກສາ. ການວິເຄາະຂໍ້ມູນ ແມ່ນນຳໃຊ້ Microsoft Excel ແລະ Program SPSS ເພື່ອຊອກຫາ ສະເລ່ຍ ($\bar{X}$) ແລະ ຄ່າຜັນປ່ຽນມາດຖານ (S.D).

ຜົນການຄົ້ນຄວ້າພົບວ່າ:

1) ປະສິດທິພາບການຈັດກິດຈະກຳການຮຽນ-ການສອນ ອ່ານຈັບໃຈຄວາມພາສາຝຣັ່ງ ໂດຍໃຊ້ວິທີສອນແບບ KWL-PLUS ຂອງນັກສຶກສາສາຍຄູພາສາຝຣັ່ງ ປີທີ 2 ລະບົບ 12+4 ທີ່ ວິທະຍາໄລຄູຫຼວງພະບາງ ມີປະສິດທິພາບເທົ່າກັບ 80.54/81.78 ເຊິ່ງມີປະສິດທິພາບສູງກວ່າເກນທີ່ກຳນົດໄວ້ 80/80.

2) ປະສິດທິຜົນການຈັດກິດຈະກຳການຮຽນ-ການສອນ ອ່ານຈັບໃຈຄວາມພາສາຝຣັ່ງ ໂດຍໃຊ້ວິທີສອນແບບ KWL-PLUS ຂອງນັກສຶກສາສາຍຄູພາສາຝຣັ່ງປີທີ 2 ລະບົບ 12+4 ທີ່ ວິທະຍາໄລຄູຫຼວງພະບາງ ເຫັນວ່າ ນັກສຶກສາມີຄວາມກ້າວໜ້າທາງດ້ານການຮຽນເພີ່ມຂຶ້ນ 64%.

3) ນັກສຶກສາສາຍຄູພາສາຝຣັ່ງ ປີທີ 2 ລະບົບ 12+4 ທີ່ ວິທະຍາໄລຄູຫຼວງພະບາງ ແມ່ນມີຄວາມເພິ່ງພໍໃຈຫຼາຍທີ່ສຸດ ຕໍ່ກັບ ການຈັດກິດຈະກຳການຮຽນ-ການສອນອ່ານຈັບໃຈຄວາມພາສາຝຣັ່ງ ໂດຍນຳໃຊ້ຮູບແບບ KWL-PLUS.

**ຄຳສຳຄັນ:** *ປະສິດທິພາບກິດຈະກຳການຮຽນ-ການສອນ, ປະສິດທິຜົນ, ອ່ານຈັບໃຈຄວາມພາສາຝຣັ່ງດ້ວຍວິທີສອນແບບKWL-PLUS*

# Learning and teaching French reading for main ideas by using KWL-PLUS technique for year 2 French students, 12+4 system at Luang Prabang Teacher Training College

**Soudachanh HATSADY***

*Major in French, Foreign Language Department, LuangPrabang Teacher Training College, Lao PDR*

***Correspondence:***

*Soudachanh HATSADY*

*Foreign Language Department, LuangPrabang Teacher Training College*

*Tel: +856 20 9999 6366,*

*E-mail:*

*Soudachanh@lpbttc.edu.la*

***Article Info:***

*Submitted: Jan 05, 2022*

*Revised: Mar 30, 2022*

*Accepted: Apr 25, 2022*

**Abstract**

The purposes of this research were to: 1) study the efficiency of the learning and teaching French reading for main ideas by using KWL-PLUS technique for year 2 students, 12+4 system Luang Prabang Teacher Training College based on the performance criteria of 80/80; 2) study the effectiveness of the learning and teaching French reading for main ideas by using KWL-PLUS technique for year 2 students; and 3) study the students' satisfaction with learning and teaching French reading for main ideas by using KWL- PLUS technique for year 2 students. The sample group was the students majoring in French language with the total number of 14 chosen by purposive random sampling. The research instruments were 4 lesson plans, 4 French reading for main idea tests from each lesson, and the students' satisfaction questionnaire. The data were analysed by mean and standard division.

The results showed as follows:

1) The efficiency of the learning and teaching French reading for main ideas by using KWL-PLUS technique for year 2 students, 12+4 system LuangPrabang Teacher Training College was 80.54/81.79, which was higher than the performance criteria 80/80.

2) The effectiveness of the learning and teaching French reading for main ideas by using KWL-PLUS technique was 0.64.

3) The students' satisfaction with learning and teaching French reading for main ideas by using KWL-PLUS technique was at a higher level with $\overline{X}$= 4.52 and S.D =1.11.

**Keywords:** *Learning-Teaching efficiency, Effectiveness, French reading for main ideas by using KWL-PLUS.*

## 1. ພາກສະເໜີ

ພາສາເປັນສິ່ງທີ່ສຳຄັນ ແລະ ຈຳເປັນຕໍ່ກັບມະນຸດເຮົາທີ່ດຳລົງຊີວິດຢູ່ໃນສັງຄົມເພາະເປັນເຄື່ອງມືໃນການສື່ສານ, ການພົບປະສ້າງສັນ, ສະແດງຄວາມຄິດເຫັນລວມທັງເປັນຫຼັກຖານສຳຄັນໃນການສຶກສາຄົ້ນຄວ້າເຖິງຄວາມເປັນມາຂອງສັງຄົມ ດັ່ງທີ່ ທິບພາວັນ ພັນຈະເລີນ (2548) ເວົ້າວ່າ ແນວຄິດຂອງກຸ່ມພຶດຕິກຳນິຍົມເປັນກຸ່ມທີ່ຮັບຄວາມຄິດຈາກທິດສະດີການຮຽນຮູ້ແບບພຶດຕິກຳນິຍົມທີ່ເນັ້ນການຕອບສະໜອງຕໍ່ສິ່ງເລົ່ານັ້ນ ແລະ ແນວຄິດທິດສະດີກຸ່ມໂຄງສ້າງທີ່ເຊື່ອວ່າພາສາເປັນເລື່ອງຂອງນິໄສ ແລະ ຄວາມຊິນເຄີຍສິ່ງສຳຄັນຂອງແນວຄິດນີ້ ຄື: ພາສາ ຄື ການເວົ້າບໍ່ແມ່ນພາສາຂຽນເພາະການໃຊ້ພາສານັ້ນເລີ່ມຕົ້ນຈາກ

ການເວົ້າ, ເດັກນ້ອຍຈະຮຽນແບບຜູ້ໃຫຍ່ໃນການສອນຈິ່ງຄວນເລີ່ມຕົ້ນຈາກການຟັງ ແລະ ການເວົ້າກ່ອນ, ພາສາເປັນເລື່ອງຂອງນິໄສ ແລະ ຄວາມຊິນເຄີຍທີ່ຈະຕ້ອງມີການຝຶກຝົນຈົນສາມາດໃຊ້ພາສາໄດ້ຢ່າງອັດຕະໂນມັດ ແລະ ພາສາແຕ່ລະພາສາມີໂຄງສ້າງແຕກຕ່າງກັນ, ໃນການສອນຄວນກະກຽມບົດຮຽນທັງດ້ານການອອກສຽງ, ໂຄງສ້າງໄວຍາກອນ ແລະ ການຈັດກິດຈະກຳໃຫ້ຜູ້ຮຽນໄດ້ຝຶກພາສາໃຫ້ຫຼາຍໂດຍສະເພາະໃນສ່ວນທີ່ແຕກຕ່າງກັນ ແລະ ອັນນີ ໂສມປະຍູນ (2542) ໄດ້ກ່າວວ່າ "ພາສາເປັນເຄື່ອງມືຂອງສັງຄົມທີ່ມະນຸດໃນຊາດຕ່າງໆໃຊ້ຕິດຕໍ່ສື່ສານກັນ ຄື ການຟັງ, ການເວົ້າ, ການອ່ານ ແລະ ການຂຽນ. ມະນຸດອາໄສທັກສະທັງ 4 ປະການນີ້ເສີມສ້າງສະຕິປັນຍາ ແລະ ຄວາມຮູ້ສຶກນຶກຄິດ, ພັດທະນາອາຊີບ, ພັດທະນາບຸກຄະລິກະພາບພ້ອມທັງສິ່ງອື່ນໆໃຫ້ກັບຕົນເອງ ແລະ ສັງຄົມດ້ວຍເຫດນີ້ພາສາຈຶ່ງມີບົດບາດ ແລະ ຄວາມສຳຄັນສຳລັບບຸກຄົນທຸກຊາດ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນໃນການປະຍຸກການສອນ ເຊິ່ງໃຫ້ຜູ້ຮຽນໄດ້ປະໂຫຍດສູງສຸດ ໂດຍສະເພາະແມ່ນການຂະຫຍາຍສະຕິປັນຍາໃຫ້ກວ້າງຂວາງໃນຫຼາຍດ້ານ ກົມສ້າງຄູ (2009).

ເນື່ອງຈາກປະເທດລາວເຮົາກໍ່ເປັນປະເທດໜຶ່ງ ທີ່ໃຊ້ພາສາຝຣັ່ງເປັນພາສາທີສອງຮອງຈາກພາສາອັງກິດ ໃນການຕິດຕໍ່ສື່ສານກັບບັນດາປະເທດຕ່າງໆໃນໂລກ ໂດຍສະເພາະກໍແມ່ນກຸ່ມອາຊ່ຽນ, ທາງລັດຖະບານເຮົາຈຶ່ງເຫັນໄດ້ຄວາມສຳຄັນຂອງການສຶກສາ, ກົມສ້າງຄູ ຈຶ່ງຈັດໃຫ້ມີ ຫຼັກສູດສາຂາວິຊາພາສາຝຣັ່ງ ທີ່ ວິທະຍາໄລຄູຫຼວງພະບາງ ແລະ ວິທະຍາໄລຄູປາກເຊ ໂດຍສະເພາະ ວິທະຍາໄລຄູຫຼວງພະບາງ ໄດ້ຮັບການອານຸຍາດຈາກ ກະຊວງສຶກສາທິການ ແລະ ກິລາ ໃຫ້ສ້າງຕັ້ງສາຍຄູພາສາຝຣັ່ງໃນສົກສຶກສາ 2007-2008 ຈຸດປະສົງແມ່ນເພື່ອໃຫ້ນັກຮຽນທີ່ຮຽນຈົບຈາກຫ້ອງສອງພາສາລາວ-ຝຣັ່ງ ແລະ ນັກຮຽນທີ່ຮຽນຈົບ ມ.7 ຈາກ 6 ແຂວງພາກເໜືອ ທີ່ມີຄວາມມຸ່ງຫວັງຢາກຈະເປັນຄູໃນອະນາຄົດໄດ້ເຂົ້າຮຽນຕໍ່ເພື່ອອອກໄປສິດສອນພາສາຝຣັ່ງ ແລະ ວິຊາວິທະຍາສາດທຳມະຊາດທີ່ສອນເປັນພາສາຝຣັ່ງ, ພາຍໃຕ້ການໃຫ້ທຶນຊ່ວຍເຫຼືອຂອງສະຖານທູດຝຣັ່ງກໍຄືໂຄງການ Valofrase (ໂຄງການສົ່ງເສີມພາສາຝຣັ່ງໃນຂົງເຂດອາຊີຕາເວັນອອກສ່ຽງໃຕ້) ແລະ ໂຄງການ AUF (ອົງການມະຫາວິທະຍາໄລທີ່ໃຊ້ພາສາຝຣັ່ງ). ວິທະຍາໄລຄູຫຼວງພະບາງເປັນສະຖາບັນສ້າງຄູແຫ່ງໜຶ່ງໃນຈຳນວນວິທະຍາໄລຄູ 8 ແຫ່ງຂອງລາວທີ່ມີໜ້າທີ່ສ້າງຄູໃຫ້ແກ່ 3 ແຂວງພາກເໜືອຂອງລາວຄື ແຂວງອຸດົມໄຊ, ແຂວງຫຼວງພະບາງ ແລະ ແຂວງໄຊຍະບູລີ ມຸ່ງສ້າງນັກສຶກສາຄູໄປຕາມ 5 ຫຼັກມູນຂອງການສຶກສາໂດຍເລັ່ງໃສ່ສ້າງນັກສຶກສາຄູໃຫ້ເປັນຄູຜູ້ທີ່ມີຄວາມອາດສາມາດທາງດ້ານຄວາມຮູ້ວິຊາສະເພາະ, ວິຊາຊີບຄູ, ມີຄຸນນະທຳ ແລະ ຈາລິຍະທຳ. ມຸ່ງເນັ້ນໃຫ້ຜູ້ຮຽນໄດ້ມີສ່ວນຮ່ວມໃນຂະບວນການຈັດການຮຽນ-ການສອນເຊິ່ງສອດຄ່ອງກັບແຜນປັບປຸງຄຸນນະພາບການສ້າງຄູ ແລະ ຍົກສູງຖານະບົດບາດຂອງຄູຂອງກະຊວງສຶກສາທິການທີ່ວ່າ: "ການໄດ້ວາງນະໂຍບາຍລວມໃນການພັດທະນາຊັບພະຍາກອນມະນຸດຕ້ອງເອົາໃຈໃສ່ 2 ດ້ານຄື: ດ້ານແນວຄິດການເມືອງ ແລະ ເກັ່ງດ້ານວິຊາສະເພາະ. ໂດຍເລັ່ງໃສ່ປັບປຸງຫຼັກສູດ, ປຶ້ມແບບຮຽນ, ວິທີສິດສອນແບບໃໝ່ເພື່ອສົ່ງເສີມຫົວຄິດປະດິດສ້າງຂອງນັກຮຽນໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງປະເທດ, ຂອງແຕ່ລະທ້ອງຖິ່ນພ້ອມທັງສອດຄ່ອງກັບທ່າອ່ຽງຂອງສັງຄົມ" (ກະຊວງສຶກສາທິການ ແລະ ກິລາ, 2020). ໃນຄວາມເປັນຈິງແລ້ວນັກຮຽນ, ນັກສຶກສາລາວ ໂດຍສະເພາະວິທະຍາໄລຄູ ຫຼວງພະບາງ ຜູ້ຮຽນຍັງມີຄວາມຮູ້ ຫຼື ມີການພັດທະນາຄວາມຮູ້ທາງດ້ານພາສາຍັງອ່ອນຫຼາຍ ໂດຍສະເພາະທັກສະການອ່ານ, ເຊິ່ງມັນສະແດງອອກຜົນການຮຽນແຕ່ລະພາກຂອງຜູ້ຮຽນໄດ້ຄະແນນໃນເກຣດຕ່ຳຫາປານກາງ ກວມເຖິງ 70% ຂອງນັກສຶກສາທັງໝົດ (ວິທະຍາໄລຄູຫຼວງພະບາງ, 2020).

ສາເຫດທີ່ເຮັດໃຫ້ຜູ້ຮຽນບໍ່ປະສົບຜົນສຳເລັດໃນການຮຽນຮູ້ນັ້ນ, ອາດເກີດຂຶ້ນຫຼາຍປັດໃຈ, ແຕ່ການນຳວິຊາການຮຽນ-ການສອນທີ່ມີພັດທະນາການຢ່າງຕໍ່ເນື່ອງມາຊ່ວຍສອນກໍ່ເປັນສ່ວນໜຶ່ງ ທີ່ເຮັດໃຫ້ຜູ້ຮຽນເກີດການຮຽນຮູ້ໄດ້ຢ່າງເປັນລະບົບ ຈົນເກີດຮຽນເອົາຄວາມຮູ້ນຳໄປໃຊ້ໄດ້. ສົມກິດ ມັງນໍເມກ (2007). ເວົ້າວ່າການສອນ ຖ້າຄູໃຊ້ວິທີການສອນບໍ່ເໝາະສົມ ຄູສອນຕາມຕຳລາເກີນໄປ ການຈັດກິດຈະກຳການຮຽນ-ການສອນທີ່ບໍ່ໄດ້ເນັ້ນ ເຖິງຂະບວນການຄິດ, ສ່ວນຕົວຜູ້ຮຽນກໍ່ລໍຖ້າຕອບຈາກຄູເທົ່ານັ້ນ ການຮຽນຮູ້ນັ້ນຈະບໍ່ມີປະສິດທິພາບ ແລະ ຜູ້ຮຽນຈະບໍ່ສາມາດສ້າງຄວາມຮູ້ຂອງຕົນເອງຢ່າງຕໍ່ເນື່ອງໄດ້.

ການສອນອ່ານໃຫ້ຜູ້ຮຽນສາມາດຈັບໃຈຄວາມຂອງເລື່ອງທີ່ອ່ານໄດ້ນັ້ນມີຫຼາຍວິທີ, ໃນນັ້ນ ວິທີສອນ KWL-PLUS ຈາກທິດສະດີຂອງ ທັດສະພອນ ເກດຖະໜອມ

(2547) ແລະ ສຸວິດ ມູນຄໍາ (2545) ໄດ້ກ່າວວ່າ: ວິທີການຮຽນຮູ້ແບບ KWL- PLUS **(K=What we know), (W=What we want to know), (L=What we have learned)** ແມ່ນວິທີການສອນເພື່ອຄວາມເຂົ້າໃຈ ແລະ ການສະຫຼຸບຄວາມທີ່ມີ ຂັ້ນຕອນ ໂດຍຫຍໍ້, ເປັນຂະບວນການຮຽນຮູ້ທີ່ເນັ້ນໃຫ້ຜູ້ຮຽນ ມີທັກສະຂະບວນການອ່ານ ເຊິ່ງສອດຄ່ອງກັບທັກສະການຄິດຢ່າງຮູ້ຕົວວ່າ ຕົນເອງກໍາລັງຄິດຫຍັງ, ມີວິທີການແນວໃດ, ສາມາດກວດສອບຄວາມຄິດຂອງຕົນເອງໄດ້ ແລະ ສາມາດປັບປ່ຽນວິທີການຄິດຂອງຕົນເອງໄດ້ໂດຍຜູ້ຮຽນຈະໄດ້ຮັບການເຝິກໃຫ້ຄິດເຖິງໃນຂະບວນການທໍາຄວາມເຂົ້າໃຈຂອງຕົນເອງ, ມີການວາງແຜນຕັ້ງຈຸດມຸ້ງໝາຍ, ກວດສອບຄວາມເຂົ້າ ໃຈຂອງຕົນ, ມີການຈັດລະບົບຂໍ້ມູນເພື່ອການດຶງມາໃຊ້ພາຍຫຼັງໄດ້ຢ່າງມີປະສິດທິພາບ. ດັ່ງນັ້ນ, ຜູ້ຄົ້ນຄວ້າຈຶ່ງໄດ້ເຫັນເຖິງຄວາມສໍາຄັນຂອງການອ່ານຈັບໃຈຄວາມພາສາຝຣັ່ງ ແລະ ກໍ່ໄດ້ນໍາເອົາວິທີສອນແບບ KWL-PLUS ເຊິ່ງເປັນວິທີການຈັດການຮຽນ-ການສອນທີ່ມີຈຸດມຸ້ງໝາຍທີ່ຊ່ວຍພັດທະນາທັກສະການອ່ານ ໂດຍສະເພາະແມ່ນການອ່ານຈັບໃຈຄວາມ ແລະ ໃນຂະນະດຽວກັນນັ້ນກໍ່ສາມາດນໍາໄປພັດທະນາໃນທັກສະອື່ນໆໄດ້ອີກເຊັ່ນ: ທັກສະການຟັງ, ການເວົ້າ ແລະ ການຂຽນນໍາອີກ ເຊິ່ງພວກເຮົາກໍ່ໄດ້ນໍາເອົາວິທີສິດສອນແບບ KWL-PLUS ເຂົ້າໃນການຈັດກິດຈະກໍາການຮຽນ-ການສອນ ຂອງນັກຮຽນໃຫ້ດີຂຶ້ນໄດ້. ຈຸດປະສົງຂອງການຄົ້ນຄວ້າ: 1). ຊອກຫາປະສິດທິພາບການຈັດກິດຈະກໍາການຮຽນ-ການສອນ ອ່ານຈັບໃຈຄວາມພາສາຝຣັ່ງ ໂດຍໃຊ້ວິທີສອນແບບ KWL-PLUS ຂອງນັກສຶກສາສາຍຄູພາສາຝຣັ່ງ ປີທີ 2 ລະບົບ 12+4 ວິທະຍາໄລຄູຫຼວງພະບາງ ສູງກວ່າເກນ 80/80, 2) ຊອກຫາປະສິດທິຜົນການຈັດກິດຈະກໍາການຮຽນ-ການສອນ ອ່ານຈັບໃຈຄວາມພາສາຝຣັ່ງ ໂດຍໃຊ້ວິທີສອນແບບ KWL-PLUS ຂອງນັກສຶກສາສາຍຄູພາສາຝຣັ່ງ ປີທີ 2 ລະບົບ 12+4 ທີ່ ວິທະຍາໄລຄູຫຼວງພະບາງ ແລະ 3) ວິເຄາະລະດັບຄວາມເພິ່ງພໍໃຈຂອງນັກສຶກສາສາຍຄູພາສາຝຣັ່ງ ປີທີ 2 ລະບົບ 12+4 ທີ່ ວິທະຍາໄລຄູຫຼວງພະບາງ ຕໍ່ກັບການຈັດກິດຈະກໍາການຮຽນ-ການສອນ ອ່ານຈັບໃຈຄວາມພາສາຝຣັ່ງ ໂດຍໃຊ້ວິທີສອນແບບ KWL – PLUS

## 2. ອຸປະກອນ ແລະ ວິທີການ

### 2.1 ກຸ່ມເປົ້າໝາຍ

ກຸ່ມເປົ້າທີ່ໄດ້ນໍາໃຊ້ເຂົ້າໃນການເຮັດວິໄຈຄັ້ງນີ້ໄດ້ແກ່ ນັກສຶກສາຄູສາຍພາສາຝຣັ່ງ ຊັ້ນປີທີ 2 ມີຈໍານວນ 1 ຫ້ອງ ມີຈໍານວນນັກສຶກສາທັງໝົດ 14 ຄົນ.

### 2.2 ເຄື່ອງມືໃນກາຄົ້ນຄວ້າ

- ບົດສອນ ຈໍານວນ 4 ບົດ ປະກອບມີ:

- ບົດທີ 1: Courrier CANAL 1, ໃຊ້ເວລາສອນທັງໝົດ 100 ນາທີ ລວມທັງເຮັດແບບທົດສອບຍ່ອຍຂອງບົດສອນສອນທີ 1 ຈໍານວນ 10 ຂໍ້.
- ບົດທີ 2: Vivre mieux, ໃຊ້ເວລາສອນທັງໝົດ 100 ນາທີ ລວມທັງເຮັດແບບທົດສອບຍ່ອຍ ຂອງບົດສອນສອນທີ 2 ຈໍານວນ 10 ຂໍ້.
- ບົດທີ 3: Evoquer des changements ໃຊ້ເວລາສອນທັງໝົດ 100 ນາທີລວມທັງເຮັດແບບທົດ ສອບຍ່ອຍຂອງບົດສອນສອນທີ 3 ຈໍານວນ 10 ຂໍ້.
- ບົດທີ 4: L'amour coup de foudre, ໃຊ້ເວລາສອນທັງໝົດ 100 ນາທີ ລວມທັງເຮັດແບບທົດສອບຍ່ອຍຂອງບົດສອນສອນທີ 4 ຈໍານວນ 10 ຂໍ້.

- ແບບທົດສອບ

- ແບບທົດສອບຍ່ອຍຫຼັງການສອນແລ້ວຂອງແຕ່ລະບົດ, ບົດລະ 10 ຂໍ້ ໃຊ້ເວລາ 15 ນາທີ/ຄັ້ງ
- ແບບທົດສອບລວມ ຫຼັງການສອນທັງໝົດ 4 ບົດ ຈໍານວນ 40 ຂໍ້ ໃຊ້ເວລາ 60 ນາທີ

- ແບບສອບຖາມຄວາມເພິ່ງພໍໃຈຂອງນັກສຶກສາສາຍຄູພາສາຝຣັ່ງ ປີທີ 2 ລະບົບ 12+4 ທີ່ມີຕໍ່ການຈັດກິດຈະກໍາການຮຽນ-ການສອນ ອ່ານຈັບໃຈຄວາມດ້ວຍວິທີສອນແບບ KWL-PLUS ມີຈໍານວນ 12 ຂໍ້.

### 2.2 ວິທີການຄົ້ນຄວ້າ

1. ສຶກສາຈຸດປະສົງການຮຽນຮູ້ຕາມຫຼັກສູດລາຍວິຊາການສອນພາສາຝຣັ່ງຂອງກະຊວງສຶກສາທິການ ແລະ ກິລາ

2. ສຶກສາຮູບແບບ, ຂັ້ນຕອນການຈັດກິດຈະກໍາການຮຽນ-ການສອນ ແລະ ກໍານົດຈຸດປະສົງການສອນຕາມວິທີສອນແບບ KWL-PLUS

3. ນໍາເອົາຄະແນນຄວາມຄິດເຫັນຂອງຜູ້ຊ່ຽວຊານໄປແທນໃສ່ສູດເພື່ອຫາຄ່າດັດສະນີຄວາມສອດຄ່ອງ, ຖ້າ

ຄ່າດັດສະນຄວາມສອດຄ່ອງເທົ່າກັບ ຫຼື ສູງກວ່າ 0.5 ສະແດງວ່າບົດສອນນັ້ນມີຄວາມເໝາະສົມ

4. ນຳເອົາບົດສອນແບບ KWL-PLUS ຈຳນວນ 4 ບົດສອນ ໄປສອນກັບກຸ່ມເປົ້າໝາຍ ສອນຈຳນວນ 4 ຄັ້ງ ໂດຍໃຊ້ເວລາໃນການສອນແມ່ນ 100 ນາທີ/ບົດສອນ.

5. ມີການທົດສອບຍ່ອຍ ຫຼັງການສອນສຳເລັດໃນແຕ່ລະບົດສອນ.

6. ມີການທົດສອບລວມ ຫຼັງການສອນສຳເລັດໃນທັງໝົດ 4 ບົດສອນ.

### 2.3 ວິທີວິເຄາະຂໍ້ມູນ

ພາຍຫຼັງທີ່ຜູ້ຄົ້ນຄວ້າເກັບກຳຂໍ້ມູນແລ້ວງກໍໄດ້ນຳເອົາຂໍ້ມູນມາຈັດລຽງ ຫຼື ຄິຂໍ້ມູນເປັນແຕ່ລະພາກສ່ວນ, ເຊິ່ງການວິເຄາະຂໍ້ມູນຄັ້ງນີ້ຜູ້ຄົ້ນຄວ້າໄດ້ດຳເນີນການດັ່ງນີ້:

1. ການຄຳນວນຫາປະສິດທິພາບຂອງການຈັດການຮຽນ-ການສອນອ່ານຈັບໃຈຄວາມ ພາສາຝຣັ່ງ ໂດຍໃຊ້ວິທີສອນແບບ KWL-PLUS ຂອງນັກຮຽນຊັ້ນປີທີ 2 ລະບົບ (12+4) ໂດຍການຫາຄ່າປະສິດທິພາບຂອງຂະບວນການຮຽນ ($E_1$) ແລະ ປະສິດທິພາບຂອງຜົນລັບ ($E_2$) ໂດຍນຳໃຊ້ Microsoft Excel ໃນການຄິດໄລ່.

2. ນຳຜົນຄະແນນຂອງນັກຮຽນມາຄຳນວນຫາດັດສະນີປະສິທິຜົນ E.I ເພື່ອວິເຄາະຫາຄ່າປະສິດທິຜົນຂອງຄວາມກ້າວໜ້າທາງການຮຽນຮູ້ຂອງນັກຮຽນ ຊັ້ນປີທີ 2 ລະບົບ 12+4 ວິທະຍາໄລຄູຫລວງພະບາງ.ໃນການໃຊ້ວິທີການຮຽນ-ການສອນແບບ KWL - PLUS ເຂົ້າໃນການສອນອ່ານຈັບໃຈຄວາມ ໂດຍນຳໃຊ້ Microsoft Excel ໃນການຄິດໄລ່.

3. ຄຳນວນຫາຄ່າ $\overline{X}$ ແລະ S.D ເພື່ອວິເຄາະຄວາມເພິ່ງພໍໃຈຂອງນັກສຶກສາ ຫຼັງການຈັດການຮຽນ-ການສອນອ່ານຈັບໃຈຄວາມ ພາສາຝຣັ່ງ ໂດຍໃຊ້ວິທີສອນແບບ KWL-PLUS ຂອງນັກຮຽນຊັ້ນປີທີ 2 ລະບົບ (12+4) ໂດຍນຳໃຊ້ Program SPSS ແລະ ນຳມາແປຜົນຄ່າສະເລ່ຍເປັນລາຍຂໍ້ໂດຍປຽບທຽບກັບເກນທີ່ຕັ້ງໄວ້ຄື ບຸນຊົມ ສີສະອາດ. (2546.).

- ຄະແນນສະເລ່ຍຕັ້ງແຕ່ 1.00-1.50 ໝາຍເຖິງມີຄວາມເພິ່ງພໍໃຈໃນລະດັບໜ້ອຍທີ່ສຸດ
- ຄະແນນສະເລ່ຍຕັ້ງແຕ່ 1.51-2.50 ໝາຍເຖິງ ມີຄວາມເພິ່ງພໍໃຈໃນລະດັບໜ້ອຍ
- ຄະແນນສະເລ່ຍຕັ້ງແຕ່ 2.51-3.50 ໝາຍເຖິງ ມີຄວາມເພິ່ງພໍໃຈໃນລະດັບປານກາງ
- ຄະແນນສະເລ່ຍຕັ້ງແຕ່ 3.51-4.50 ໝາຍເຖິງ ມີຄວາມເພິ່ງພໍໃຈໃນລະດັບຫຼາຍ
- ຄະແນນສະເລ່ຍຕັ້ງແຕ່ 4.51-5.00 ໝາຍເຖິງ ມີຄວາມເພິ່ງພໍໃຈໃນລະດັບຫຼາຍທີ່ສຸດ.

## 3. ຜົນໄດ້ຮັບ

ການຈັດກິດຈະກຳການຮຽນ-ການສອນອ່ານຈັບໃຈຄວາມພາສາຝຣັ່ງ ໂດຍນຳໃຊ້ວິທີສອນແບບ KWL-PL ຂອງ ນັກສຶກສາຄູສາຍພາສາຝຣັ່ງ ຊັ້ນປີທີ 2 ລະບົບ 12+4 ມີຄື:

1. ປະສິດທິພາບ ການສອນຂອງການອ່ານຈັບໃຈຄວາມຄວາມ ກ່ອນ ແລະ ຫຼັງການຮຽນ ດ້ວຍວິທີສອນແບບ KWL-PLUS ຂອງນັກສຶກ ຊັ້ນປີທີ 2 ເຫັນວ່າປະສິດທິພາບຂອງຂະບວນການຮຽນ $E_1$= 80.54 ແລະ ປະສິດທິພາບຂອງຜົນການຮຽນ $E_2$= 81.78, ດັ່ງນັ້ນການຈັດການຮຽນການສອນອ່ານຈັບໃຈຄວາມພາສາຝຣັ່ງໂດຍໃຊ້ວິທີສອນແບບ KWL-PLUS ຂອງນັກສຶກສາ ຊັ້ນປີທີ 2 ມີປະສິດທິພາບເທົ່າກັບ 80.54/81.78 ເຊິ່ງສູງກວ່າເກນທີ່ກຳນົດຄື 80/80.

2. ດັດສະນີປະສິດທິຜົນການຮຽນຂອງນັກສຶກສາໂດຍໃຊ້ວິທີສອນ ຂອງການອ່ານຈັບໃຈຄວາມພາສາຝຣັ່ງໂດຍໃຊ້ວິທີສອນແບບ KWL-PLUS ຂອງນັກສຶກສາ ຊັ້ນປີທີ 2 ລະບົບ 12+4 ວິທະຍາໄລຄູຫຼວງພະບາງເຫັນວ່າດັດສະນີປະສິດທິຜົນຂອງການຮຽນຕໍ່ການຮຽນອ່ານຈັບໃຈຄວາມ ວິຊາພາສາຝຣັ່ງໂດຍໃຊ້ວິທີສອນແບບ KWL-PLUS ມີຄ່າເທົ່າກັບ 0.64 ໝາຍຄວາມວ່ານັກສຶກສາມີການພັດທະນາທາງດ້ານການຮຽນອ່ານຈັບໃຈຄວາມ ເພີ່ມຂຶ້ນ 64%.

3. ຄວາມເພິ່ງພໍໃຈຂອງນັກສຶກສາເຫັນວ່າ ນັກຮຽນທີ່ຜ່ານການຮຽນ - ການສອນ ຂອງການອ່ານຈັບໃຈຄວາມພາສາຝຣັ່ງ ໂດຍໃຊ້ວິທີສອນແບບ KWL-PLUS ຂອງນັກສຶກສາ ຊັ້ນປີທີ 2 ວິທະຍາໄລຄູຫຼວງພະບາງ ຈຳນວນ 14 ຄົນ, ໂດຍລວມແລ້ວມີຄວາມເພິ່ງພໍໃຈຂອງນັກສຶກສາທີ່ມີຕໍ່ການຮຽນ-ການສອນ ແມ່ນຢູ່ໃນລະດັບມີຄວາມເພິ່ງພໍໃຈຫຼາຍທີ່ສຸດ, ໂດຍມີຄ່າສະເລ່ຍເທົ່າກັບ 4.52 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 1.11 ເມື່ອພິຈາລະນາເປັນລາຍຂໍ້ແລ້ວເຫັນວ່າ ຂໍ້ທີ່ມີຄວາມເພິ່ງພໍໃຈຫຼາຍກວ່າໝູ່ ແມ່ນຄູ

ແນະນຳວິທີການຕັ້ງຄຳຖາມ ຢູ່ໃນຂັ້ນ W ເຊິ່ງມີຄ່າສະເລ່ຍເທົ່າກັບ 4.79 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.43, ນັກສຶກສາສາມາດອ່ານຈັບໃຈຄວາມເລື່ອງຂອງບົດເລື່ອງ ຂັ້ນ L ເຊິ່ງມີຄ່າສະເລ່ຍເທົ່າກັບ 4.79 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.43 ແລະ ຄູສາມາດສະຫຼຸບບົດເລື່ອງຂອງແຕ່ລະບົດເລື່ອງເຊິ່ງນອນຢູ່ໃນຂັ້ນ PLUS ມີຄ່າສະເລ່ຍ ເທົ່າ ກັບ 4.79 ແລະຄ່າຜັນປ່ຽນມາດຖານເທົ່າກັບ 0.43 ເຊິ່ງຈັດຢູ່ໃນເກນມີຄວາມເພິ່ງພໍໃຈຫຼາຍທີ່ສຸດ, ຮອງລົງມາແມ່ນ ນັກສຶກສາສາມາດ ຕັ້ງຄຳຖາມດ້ວຍຕົນເອງ ເຊິ່ງມີຄ່າສະເລ່ຍເທົ່າກັບ 4.57 ແລະຄ່າຜັນປ່ຽນມາດຖານເທົ່າກັບ 0.51, ເຊິ່ງຈັດຢູ່ໃນເກນມີຄວາມເພິ່ງພໍໃຈຫຼາຍທີ່ສຸດ, ແລະ ຂໍ້ທີ່ມີຄ່າຕໍ່າທີ່ສຸດແມ່ນນັກສຶກສາໄດ້ທົບທວນຄວາມຮູ້ເກົ່າກ່ຽວກັບ ເລື່ອງທີ່ໄດ້ຮຽນ, ນັກສຶກສາສາມາດອ່ານບົດເລື່ອງ ແລະ ນັກສຶກສາສາມາດຕອບ ຄຳຖາມທີ່ຕົນເອງສ້າງໄດ້ ເຊິ່ງມີຄ່າສະເລ່ຍແມ່ນ 4.29 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.61 ເຊິ່ງຈັດຢູ່ໃນເກນມີຄວາມເພິ່ງພໍໃຈຫຼາຍ.

## 4. ວິພາກຜົນ

ການຈັດການຮຽນ-ການສອນອ່ານຈັບໃຈຄວາມພາສາຝຣັ່ງ ໂດຍໃຊ້ວິທີສອນແບບ KWL -PLUS ຂອງນັກສຶກສາຄູສາຍພາສາຝຣັ່ງ ຊັ້ນປີທີ 2 ລະບົບ 12+4 ທີ່ວິທະຍາໄລຄູຫຼວງພະບາງ ມີປະສິດທິພາບເທົ່າກັບ 80.54/81.78 ໝາຍຄວາມວ່ານັກສຶກສາໄດ້ຄະແນນສະເລ່ຍຈາກການປະເມີນຫຼັງຮຽນ ແລະ ການປະເມີນຈາກບົດທົດສອບຍ່ອຍ, ຂອງແຕ່ລະບົດ ສະເລ່ຍເທົ່າກັບ 80.54 ແລະ ຄະແນນສະເລ່ຍຈາກການປະເມີນຫຼັງການຈັດກິດຈະກຳການຮຽນ ການ-ສອນໂດຍນຳໃຊ້ວິທີສອນແບບ KWL -PLUS ເທົ່າກັບ 81.78, ສະແດງວ່າການຈັດກິດຈະກຳການຮຽນ-ການສອນອ່ານຈັບໃຈຄວາມໂດຍນຳໃຊ້ວິທີສອນແບບ KWL -PLUS ມີປະສິດທິພາບ ຕາມເກນ 80/80 ເຊິ່ງສອດຄ່ອງກັບບົດວິໄຈຂອງ ບຸດສະລິນ ສິມບັດ (2554) ການຈັດການຮຽນຮູ້ໂດຍໃຊ້ຮູບແບບ KWL-PLUS ເພື່ອພັດທະນາຄວາມສາມາດດ້ານການອ່ານສະຫຼຸບໃຈຄວາມຂອງນັກຮຽນຊັ້ນປະຖົມສຶກສາ ປີທີ 4 ມີປະສິດທິພາບເທົ່າກັບ 83.47/83.04, ແລະ ສອດຄ່ອງກັບບົດຄົ້ນຄວ້າຂອງ ສະສິທອນ ສະວານໄຊ (2554) ການພັດທະນາທັກສະການອ່ານຈັບໃຈຄວາມພາສາອັງກິດ ໂດຍໃຊ້ກິດຈະກຳການຮຽນຮູ້ແບບ KWL-PLUS ຊັ້ນມັດທະຍົມສຶກສາ ປີທີ 1, ຈາກຜົນການສຶກສາພົບວ່າ ການພັດທະນາທັກສະການອ່ານຈັບໃຈຄວາມພາສາອັງກິດ ໂດຍໃຊ້ກິດຈະ ກຳການຮຽນຮູ້ແບບ KWL-PLUS ຊັ້ນມັດທະຍົມສຶກສາ ປີທີ 1 ແມ່ນມີປະສິດທິພາບເທົ່າກັບ 77.21/ 77.75 ເຊິ່ງສູງກວ່າເກນທີ່ຕັ້ງໄວ້ ແລະ ຊໍ່ເອື້ອງ ລັດຕະນະວົງ (2548), ການພັດທະນາແຜນການຈັດກິດຈະກຳການຮຽນຮູ້ ເພື່ອພັດທະນາທັກສະການອ່ານພາສາອັງກິດສຳຫລັບນັກຮຽນ ປີທີ 4, ໂດຍໃຊ້ເທັກນິກແບບ KWL-PLUS ເຫັນວ່າມີປະສິດທິພາບເທົ່າ 79.13/77.94, ເຊິ່ງສູງກວ່າເກນທີ່ຕັ້ງໄວ້, ແລະ ເຂັມລັດ ສະໝີ ສຸບັນນະລິດ (2555), ການປຽບທຽບໃນການອ່ານພາສາອັງກິດ ການວິເຄາະ ແລະ ແຮງຈູງໃຈຊອກຫາສຳປະສິດທາງການຮຽນ ຂອງນັກຮຽນຊັ້ນມັດທະຍົມສຶກສາ ປີທີ 6 ລະຫວ່າງການຈັດກິດຈະກຳການຮຽນຮູ້ຕາມແນວຄິດໂດຍໃຊ້ສະໝອງເປັນຖານກັບການຈັດກິດຈະກຳການຮຽນຮູແບບ KWL-PLUS, ມີປະສິດທິພາບເທົ່າກັບ 82.13/81.08 ເຊິ່ງສູງກວ່າເກນທີ່ໄດ້ກຳນົດໄວ້. ເນື່ອງຈາກວ່າການຈັດກິດຈະກຳການຮຽນ-ການສອນໂດຍໃຊ້ວິທີສອນແບບ KWL-PLUS ແມ່ນວິທີການສອນເພື່ອຄວາມເຂົ້າໃຈ ແລະ ການສະຫຼຸບໃຈຄວາມທີ່ມີຂັ້ນຕອນ ເປັນຂະບວນການໂດຍໂຕຫຍໍ້ຕ່າງໆ ແລະ ເປັນການສອນທີ່ປະກອບດ້ວຍອົງປະກອບ ແລະ ເນື້ອໃນສຳຄັນ, ເຊັ່ນຜົນການຮຽນ, ຈຸດປະສົງຂອງການຮຽນ-ການສອນ, ກິດຈະກຳການຮຽນ, ການວັດປະເມີນຜົນທີ່ຈະເປັນແນວທາງໄປສູ່ຂະບວນການຮຽນ-ການສອນຢ່າງມີປະສິດທິພາບ.

ປະສິດທິຜົນ ການຮຽນ-ການສອນອ່ານຈັບໃຈຄວາມພາສາຝຣັ່ງ ໂດຍໃຊ້ວິທີສອນແບບ KWL-PLUS ຂອງນັກສຶກສາຄູສາຍພາສາຝຣັ່ງ ຊັ້ນປີທີ 2 ລະບົບ 12+4 ທີ່ ວິທະຍາໄລຄູຫຼວງພະບາງ ມີຄ່າເທົ່າກັບ 0.64 ອັນເນື່ອງມາຈາກຜູ້ຮຽນໄດ້ປະຕິບັດຕາມຂັ້ນຕອນການຈັດກິດຈະກຳການຮຽນ-ການສອນ ໂດຍໃຊ້ວິທີສອນແບບ KWL-PLUS ເຊິ່ງເຮັດໃຫ້ຜູ້ຮຽນບໍ່ສັບສົນກັບເນື້ອໃນຂອງບົດຮຽນ ແລະ ເຂົ້າໃຈບົດຮຽນຫຼາຍຂຶ້ນ, ຜູ້ຮຽນໄດ້ມີການພັດທະນາຮອບດ້ານຢ່າງສົມດູນ, ສາມາດໃຫ້ຜູ້ຮຽນໄດ້ມີການຄົ້ນຄິດ, ຊອກຫາຂໍ້ມູນດ້ວຍຕົນເອງ, ມີການແລກປ່ຽນສົນທະນາຮ່ວມກັນ ແລະ ສາມາດນຳໄປໃຊ້ໃຫ້ເໝາະສົມກັບສະພາບຄວາມເປັນຈິງ ແລະ ສະໜອງຄວາມຕ້ອງການທີ່ແຕກຕ່າງຂອງນັກສຶກສາແຕ່ລະຄົນຮຽນຮູ້ຢ່າງມີ

ຄວາມສຸກ, ອີກຢ່າງຍັງມີຄູຜູ້ສອນຄອຍຊ່ວຍເຫຼືອແນະນຳ ສາມາດເຮັດໃຫ້ຜູ້ຮຽນແກ້ໄຂບັນຫາທີ່ເກີດຂຶ້ນໄດ້ຢ່າງມີເຫດຜົນ, ຈຶ່ງສົ່ງຜົນໃຫ້ຜູ້ຮຽນມີມີຄວາມກ້າວໜ້າໃນການຮຽນຫຼາຍຂຶ້ນ, ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ ສະສິທອນ ຊະວານໄຊ (2554), ດັດສະນີປະສິດທິຜົນແຜນການຈັດກິດຈະກຳການຮຽນຮູ້ແບບ KWL-PLUS ເລື່ອງ ການພັດທະນາທັກສະການອ່ານຈັບໃຈຄວາມພາສາອັງກິດ ໂດຍໃຊ້ກິດຈະກຳການຮຽນຮູ້ແບບ KWL-PLUS ຊັ້ນມັດທະຍົມສຶກສາ ປີທີ 1, ຈາກຜົນການສຶກສາພົບວ່າ ການພັດທະນາທັກສະການອ່ານຈັບໃຈຄວາມພາສາອັງກິດ ໂດຍໃຊ້ກິດຈະກຳການຮຽນຮູ້ແບບ KWL-PLUS ຊັ້ນມັດທະຍົມສຶກສາ ປີທີ 1 ມີຄ່າເທົ່າກັບ 0.5792 ແລະ ບຸດສະລິນ ສົມບັດ (2554), ຈາກຜົນການສຶກສາຄົ້ນຄວ້າພົບວ່າ ແຜນການຈັດການຮຽນຮູ້ ໂດຍໃຊຮູບແບບ KWL-PLUS ເພື່ອພັດທະນາຄວາມສາມາດດ້ານການອ່ານສະຫຼຸບຄວາມ ກຸ່ມສາລະການຮຽນຮູ້ພາສາໄທ ຊັ້ນປະຖົມສຶກສາ ປີທີ 4 ມີດັດສະນີປະສິດທິຜົນເທົ່າກັບ 0.7136 ແລະ ສະຫວີອອນ ພັນຈັນ (2554), ຈາກຜົນການສຶກສາຄົ້ນຄວ້າພົບວ່າ ແຜນການຈັດກິດຈະກຳການຮຽນຮູ້ ດ້ວຍເທັກນິກການສອນແບບ KWL-PLUS ເລື່ອງ ການພັດທະນາຄວາມສາມາດການອ່ານດ້ານວິເຄາະ ດ້ວຍເທັກນິກ KWL-PLUS ກຸ່ມສາລະການຮຽນຮູ້ພາສາໄທ ຊັ້ນມັດທະຍົມປີທີ 2 ມີຄ່າເທົ່າກັບ 0.81 ແລະ ຊໍ່ເອື້ອງ ລັດຕະນະວົງ (2548), ຈາກການສຶກສາຄົ້ນຄວ້າໄດ້ສະແດງໃຫ້ເຫັນວ່າ ດັດສະນີປະສິດທິຜົນຂອງແຜນການຈັດກິດຈະກຳການຮຽນຮູ້ ເພື່ອພັດທະນາທັກສະການອ່ານພາສາອັງກິດສຳລັບນັກຮຽນ ປີທີ 4, ໂດຍໃຊ້ເທັກນິກແບບ KWL-PLUS ມີຄ່າເທົ່າກັບ 0.5508 ແລະ ເຂັມລັດສະໝີ ສຸບັນນະລິດ (2555), ຈາກການສຶກສາຄົ້ນຄວ້າພົບວ່າ ດັດສະນີປະສິດທິຜົນຂອງແຜນການຈັດກິດຈະກຳການຮຽນຮູ້ໂດຍໃຊ້ສະໝອງເປັນຖານ ແລະ ແບບ KWL-PLUS ວິຊາພາສາອັງກິດ ຊັ້ນມັດທະຍົມສຶກສາ ປີທີ 6 ມີຄ່າເທົ່າກັບ 0.6226.

ຄວາມເພິ່ງພໍໃຈຂອງນັກສຶກສາທີ່ມີຕໍ່ ການຮຽນ-ການສອນອ່ານຈັບໃຈຄວາມພາສາຝຣັ່ງ ໂດຍໃຊ້ວິທີສອນແບບ KWL-PLUS ຂອງນັກສຶກສາຄູສາຍພາສາຝຣັ່ງ ຊັ້ນປີທີ 2 ລະບົບ 12+4 ທີ່ ວິທະຍາໄລຄູຫຼວງພະບາງ ສະເລ່ຍແລ້ວແມ່ນຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍທີ່ສຸດ ຍ້ອນວ່າວິທີສອນແບບ KWL-PLUS ເປັນວິທີສອນເພື່ອເຝິກໃຫ້ຜູ້ຮຽນມີຄວາມເນັ້ນໜັກໃນຂະບວນການຮຽນຮູ້ຂອງຕົນເອງໂດຍມີການວາງແຜນກວດສອບຄວາມເຂົ້າໃຈຂອງຕົວເອງ ຕະຫຼອດຈົນມີການຈັດລະບົບຂໍ້ມູນຄວາມຮູ້ຢ່າງຕັ້ງຈຸດໝາຍ, ມີປະສິດທິພາບ ສອດຄ່ອງກັບບົດວິໄຈຂອງ ສະສິທອນ ຊະວານໄຊ (2554) ນັກຮຽນມີຄວາມເພິ່ງພໍໃຈຕໍ່ກັບການຮຽນວິຊາພາສາອັງກິດດ້ວຍການຈັດກິດຈະກຳການຮຽນຮູ້ແບບ KWL-PLUS ເລື່ອງ ການພັດທະນາທັກສະການອ່ານຈັບໃຈຄວາມພາສາອັ່ງກິດ ໂດຍໃຊ້ກິດຈະກຳການຮຽນຮູ້ແບບ KWL-PLUS ຊັ້ນມັດທະຍົມສຶກສາ ປີທີ 1, ເຊິ່ງມີຄ່າສະເລ່ຍເທົ່າກັບ 4.56 ໂດຍລວມແລ້ວມີຄວາມເພິ່ງພໍໃຈຫຼາຍທີ່ສຸດ.

## 5. ສະຫຼຸບ

ການຮຽນ-ການສອນອ່ານຈັບໃຈຄວາມພາສາຝຣັ່ງ ໂດຍໃຊ້ວິທີສອນແບບ KWL-PLUS ຂອງນັກສຶກສາຄູສາຍພາສາຝຣັ່ງ ຊັ້ນປີທີ 2 ລະບົບ 12+4 ທີ່ ວິທະຍາໄລຄູຫຼວງພະບາງ ພົບວ່າ ມີປະສິດທິພາບສູງກວ່າເກນທີ່ຕັ້ງໄວ້, ປະສິດທິຜົນຂອງການຈັດການຮຽນ-ການສອນອ່ານຈັບໃຈຄວາມພາສາຝຣັ່ງ ໂດຍໃຊ້ວິທີສອນແບບ KWL-PLUS ຂອງນັກສຶກສາຄູສາຍພາສາຝຣັ່ງ ຊັ້ນປີທີ 2 ລະບົບ 12+4 ທີ່ ວິທະຍາໄລຄູຫຼວງພະບາງ ມີການພັດທະນາ ແລະ ມີຄວາມກ້າວໜ້າໃນການຮຽນດີຂຶ້ນ ແລະ ນັກສຶກສາຄູສາຍພາສາຝຣັ່ງ ຊັ້ນປີທີ 2 ລະບົບ 12+4 ທີ່ ວິທະຍາໄລຄູຫຼວງພະບາງ ແມ່ນມີຄວາມເພິ່ງພໍໃຈຫຼາຍທີ່ສຸດຕໍ່ກັບ ການຮຽນ-ການສອນອ່ານຈັບໃຈຄວາມພາສາຝຣັ່ງ ໂດຍໃຊ້ວິທີສອນແບບ KWL-PLUS.

## 6. ຂໍຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ

ກົມສ້າງຄູ. (2009). ຫຼັກການສອນປະຖົມ. ຈັດພິມທີ່ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ. (2020). ແຜນຍຸດທະສາດການສຶກສາ 27 ປີ 2021-2025. ວຽງຈັນ:

ກະຊວງສຶກສາທິການ ແລະກິລາ

ເຂັມລັດສະໝີ ສຸບັນນະລິດ. (2555). ການປຽບທຽບຄວາມເຂົ້າໃຈໃນການອ່ານ ພາສາອັງກິດ ການວິເຄາະ ແລະແຮງຈູງໃຈໃຝ່ສຳປະສິດທາງການຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາ ປີທີ 6, ລະຫວ່າງການຈັດກິດຈະກຳການຮຽນຮູ້ແບບ KWL-PLUS (Master's Thesis). ມະຫາສາລະຄາມ: ມະຫາວິທະຍາໄລມະຫາສາລະຄາມ.

ສະສິທອນ ສະວານໄຊ, ສ. (2554). ການພັດທະນາການອ່ານຈັບໃຈຄວາມພາສາອັງກິດ ໂດຍການຈັດກິດຈະກຳການຮຽນຮູ້ແບບ KWL-PLUS ຊັ້ນມັດທະຍົມສຶກສາປີທີ 1 (Master's Thesis). ມະຫາວິທະຍາໄລມະຫາສາລະຄາມ, ມະຫາສາລະຄາມ.

ສົມກິດ ມັງນໍເມກ. (2009). ບົດສະຫຼຸບການປະຕິບັດແຜນ ພັດທະນາສຶກສາປີ 2008-2009 ແລະ ແຜນພັດທະນາການສຶກສາປີ 2009-2010 ວຽງຈັນ ກະຊວງສຶກສາທິການ ແລະ ກິລາ.

ສະຫວິອອນ ເພັນຈັນ. (2554). ການພັດທະນາຄວາມສາມາດອ່ານເຊີງວິເຄາະດ້ວຍເທັກນິກ KWL-PLUS. ກຸ່ມສາລະການຮຽນຮູ້ພາສາໄທ ຊັ້ນມັດທະຍົມສຶກສາປີທີ 2 (Master's Thesis). ມະຫາສາລະຄາມ: ມະຫາວິທະຍາໄລມະຫາສາລະຄາມ.

ຊໍ່ເອື້ອງ ລັດຕະນະວົງ. (2548). ການພັດທະນາແຜນການຈັດ ກິດຈະກຳການຮຽນຮູ້ເພື່ອພັດທະນາທັກສະການອ່ານ ພາສາອັງກິດ ສຳລັບນັກຮຽນຊັ້ນມັດທະຍົມສຶກສາ ປີທີ 4 ໂດຍໃຊ້ເທັກນິກ KWL-PLU (Master's Thesis). ມະຫາສາລະຄາມ: ມະຫາວິທະຍາໄລມະຫາສາລະຄາມ.

ສຸວິດ ມູນຄຳ. (2545). 21 ວິທີການຈັດການຮຽນຮູ້ເພື່ອພັດທະນາຄະບວນການຄິດ. ກຸງເທບມະຫານະຄອນ: ພາບພິມ.

ບຸດສະລິນ ສົມບັດ. (2554). ການຈັດການຮຽນຮູ້ໂດຍໃຊ້ຮູບແບບ KWL - PLUS ເພື່ອພັດທະນາຄວາມສາມາດດ້ານການສະຫຼຸບຄວາມ ຂອງນັກຮຽນປະຖົມສຶກສາ ປີທີ 4 (Master's Thesis). ມະຫາສາລະຄາມ: ມະຫາວິທະຍາໄລມະຫາສາລະຄາມ.

ບຸນຊົມ ສີສະອາດ. (2553). ການວິໄຈເບື້ອງຕົ້ນ. ກຸງເທບມະຫານະຄອນ: ສຸລິຍະສາດຈຳກັດ.

ທິບພາວັນ ພັນຈະເລີນ. (2548). ສຶກສາຄວາມສາມາດອ່ານຈັບໃຈຄວາມຂອງນັກຮຽນຊັ້ນປະຖົມປີທີ 5 ທີ່ມີຄວາມບົກຜ່ອງໃນການໄດ້ງິນລະດັບຫູຕຶງຈາກການສອນອ່ານດ້ວຍວິທີ KWL-PLUS. ມະຫາວິທະຍາໄລສີນະຄະຣິນວິໂຣດ: ສາຂາວິຊາການສຶກສາພິເສດ.

ທັດສະພອນ ເກດຖະໜອມ. (2547). ການອ່ານປະຕິສຳພັນດ້ວຍວິທີ KWL-PLU. ກຸງເທບມະຫານະຄອນ: ຄະນະບໍລິຫານທຸລະກິດ ສາຂາການຈັດການວິທະຍາໄລເທັກໂນໂລຊີຊິນບູລີ.

ວັນນີ ໂສມປະຍູນ. (2542). ການສອນພາສາໄທລະດັບລະດັບປະຖົມສຶກສາ. ກຸງເທບມະຫານະຄອນ : ໂຮງພິມໄທວັດທະນະພານິດ.